ສຳນັກງານ ຄຄຊ
ຮັບ
ເລກທີ...0643...
ວັນທີ 20 JUN 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 25 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 18 ມິຖຸນາ 2018

# ບົດລາຍງານ
## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 28/05-01/06/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ
### 1. ສະພາບເສດຖະກິດເງິນຕາສາກົນ
#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,07% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກອັດຕາສ່ວນການວ່າງງານຂອງສະຫະລັດອາເມລິກາ ໃນເດືອນ 05/2018 ຫຼຸດລົງ ຢູ່ໃນລະດັບ 3,8% ຈາກ 3,9% ໃນເດືອນຜ່ານມາ ແລະ ຕົວເລກຍອດຂາຍສິນຄ້າຂາຍຍ່ອຍຂອງສະຫະພາບເອີຣົບ ໃນເດືອນ 04/2018 ເພີ່ມຂຶ້ນ ຢູ່ໃນລະດັບ 2,9% ຈາກ 1,7% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 21-25/05/2018 | ອາທິດນີ້ 28/05-01/06/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1712 | 1,1704 | 0,07% |
| ເຢນ/ໂດລາ | 109,46 | 109,27 | 0,17% |
| ບາດ/ໂດລາ | 31,920 | 31,98 | -0,19% |
| ເປໂຊ/ໂດລາ | 52,58 | 52,52 | 0,13% |
| ຣູເປັຍ/ໂດລາ | 14.115,00 | 13.890,00 | 1,62% |
| ໂດລາສິງກະໂປ/ໂດລາ | 1,3387 | 1,3370 | 0,13% |
| ຢວນ/ໂດລາ | 6,3871 | 6,4154 | -0,44% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 3,27% ຈາກ 69,42 ໂດລາ/ບາເຣວ ມາເປັນ 67,15 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 0,53 ລ້ານບາເຣວ ຂອງອາທິດທີ 25/05/2018 ຈາກເພີ່ມຂຶ້ນ 1,88 ລ້ານບາເຣວ ໃນອາທິດ ຜ່ານມາ;
- ລາຄາຄຳຫຼຸດລົງ 0,42% ຈາກ 1.304,91 ໂດລາ/ອອນ ມາເປັນ 1.299,47 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,10% ແລະ ອ່ອນຄ່າລົງ 0,01% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 1,25% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 2,97% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 25/05/2018 | | | ອາທິດນີ້ 01/06/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.397,40 | 8.424,16 | 8.409,24 | 8.407,61 | 8.430,33 | 8.417,67 | -0,12% | -0,07% | -0,10% | -1,26% | -1,23% | -1,25% |
| ບາດ | 262,84 | 264,51 | 263,97 | 262,90 | 264,52 | 264,00 | -0,02% | -0,004% | -0,01% | -2,99% | -2,94% | -2,97% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 1,20% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,83%;
- ປະລິມານເງິນ M2 ຫຼຸດລົງ 0,27% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,83%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທີ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (25-31/05/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 16,34 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 46,95 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 30,61 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 382,28 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 165,14 ລ້ານບາດ ແລະ ຂາຍເງິນບາດໄດ້ 547,42 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ເພີ່ມຂຶ້ນ 37,20% ແລະ ເງິນບາດ ເພີ່ມຂຶ້ນ 0,27%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລານຳທະນາຄານທຸລະກິດ ຈຳນວນ 63,28 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 96,80 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,84 ລ້ານໂດລາ ແລະ ເງິນບາດ ຈຳນວນ 71,25 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ທຫລ ຂາຍເງິນໂດລາ ຈຳນວນ 40 ລ້ານໂດລາ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 18-24/05/2018 | | ອາທິດນີ້ 25-31/05/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. <u>ການຊື້ເງິນຕາຕ່າງປະເທດ</u> | **28,41** | **175,42** | **46,95** | **165,14** | **65,26%** | **-5,86%** |
| - ທ/ຄທຸລະກິດລັດ | 12,96 | 40,26 | 14,71 | 77,24 | 13,50% | 91,85% |
| - ທ/ຄທຸລະກິດອື່ນໆ | 15,45 | 135,16 | 32,24 | 87,90 | 108,67% | -34,97% |
| 2. <u>ການຂາຍເງິນຕາຕ່າງປະເທດ</u> | **28,12** | **535,20** | **30,61** | **547,42** | **8,85%** | **2,28%** |
| - ທ/ຄທຸລະກິດລັດ | 14,60 | 183,26 | 16,25 | 204,87 | 11,30% | 11,79% |
| - ທ/ຄທຸລະກິດອື່ນໆ | 13,52 | 351,94 | 14,36 | 342,55 | 6,21% | -2,67% |
| <u>ຊື້-ຂາຍສຸດທິ ທທກ</u> | **0,29** | **-359,78** | **16,34** | **-382,28** | **5.534,48%** | **6,25%** |
| - ຜິດດ່ຽງຊື້-ຂາຍ | 1,02% | -205,10% | 34,80% | -231,49% | 3.311,76% | 12,87% |
| - ມູນຄ່າການຊື້-ຂາຍ | **56,53** | **710,62** | **77,56** | **712,56** | **37,20%** | **0,27%** |
| 3. <u>ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ</u> | **-16,73** | **-92,58** | **63,28** | **-96,80** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 80,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 16,73 | 92,58 | 16,72 | 96,80 | | |
| 4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u> | **5,71** | **111,92** | **4,84** | **71,25** | | |
| 5. <u>ທຫລ ກັບ ພາກສ່ວນອື່ນໆ</u> | **0,00** | **0,00** | **-40,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 40,00 | 0,00 | | |

**2.4 <u>ສະພາບອັດຕາເງິນເຟີ້</u>**

ອັດຕາເງິນເຟີ້ໃນເດືອນ 05/2018 ຄາດວ່າຈະຢູ່ໃນລະດັບ 2,22% (ຕົວເລກຄາດຄະເນ).

**2,5 <u>ການຄຸ້ມຄອງເງິນຕາຕ່າງປະເທດ</u>**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 289,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 123,01 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 74,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 73,63 ລ້ານໂດລາສະຫະລັດທຽບເທົ່າ.

**3. <u>ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ຈໍານວນ 967 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 209 ສະບັບ ເທົ່າກັບ 27,57% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 334,15 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 1,35 ຕື້ກີບ ເທົ່າກັບ 0,41%.

- ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (25-31/05/2018) ມີທັງໝົດ 4,014 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 3,946 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈໍານວນ 246 ຕື້ກີບ ຈາກ 1.300,79 ຕື້ກີບ ມາເປັນ 1.054,83 ຕື້ກີບ ເທົ່າກັບ 18,90%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈໍານວນ 68 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈໍານວນ 152,10 ຕື້ກີບ ຈາກ 158,69 ຕື້ກີບ ມາເປັນ 6,59 ຕື້ກີບ ເທົ່າກັບ 95,84%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 918,79 ຈຸດ ຫຼຸດລົງ ຈາກ 926,49 ຈຸດ ຫຼື ເທົ່າກັບ 0,83% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 391.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,86 ຕື້ກີບ ຫຼຸດລົງ 13,47% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 30,83% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen, SVN ແລະ BCEL.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| **BCEL** | 289.000 | 1.534.585.000 | 5.400 | **272.600** | **1.435.900.000** | **5.400** | -5,67 | -6,43 | - | 0,00 |
| **EDL-GEN** | 132.700 | 598.415.000 | 4.500 | **79.400** | **356.305.000** | **4.450** | -40,17 | -40,46 | -50 | -1,11 |
| **LWPC** | - | - | 4.600 | **1.200** | **6.635.000** | **6.600** | - | - | 2.000 | 43,48 |
| **PTL** | 300 | 490.000 | 1.700 | **2.800** | **4.630.000** | **1.600** | 833,33 | 844,90 | -100 | -5,88 |
| **SVN** | 200 | 570.000 | 2.850 | - | - | **2.850** | -100,00 | -100,00 | - | 0,00 |
| **PCD** | 700 | 990.000 | 1.450 | **11.900** | **16.300.000** | **1.350** | 1.600,00 | 1.546,46 | -100 | -6,90 |
| **LCC** | 8.500 | 17.850.000 | 2.100 | **23.300** | **43.175.000** | **2.050** | 174,12 | 141,88 | -50 | -2,38 |
| ທັງໝົດ | 431.400 | 2.152.900.000 | | **391.200** | **1.862.945.000** | - | -9,32 | -13,47 | - | - |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມປຶກສາຫາລືບາງວຽກງານເລັ່ງດ່ວນກ່ຽວກັບວຽກງານທະນາຄານ ທີ່ (ສຫດ), ❷ ກອງປະຊຸມຄົ້ນຄວ້າຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ທຫລ), ❸ ກອງປະຊຸມສະພາບໍລິຫານ ທະນາຄານສົ່ງເສີມກະສິກຳ ທີ່ (ທສກ), ❹ ກອງປະຊຸມໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ແລະ ພາກສ່ວນກ່ຽວຂ້ອງ ທີ່ (ກະຊວງແຜນການແລະການລົງທຶນ), ❺ ກອງປະຊຸມຄັ້ງປະຖົມມະເລີກຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ທີ່ (ໂຮງແຮມລາວພຣາຊາ), ❻ ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ (ກະຊວງການເງິນ), ❼ ກອງປະຊຸມໜ່ວຍງານຄົ້ນຄວ້າປັບປຸງນິຕິກຳທີ່ຮັບໃຊ້ໃນການເຄື່ອນໄຫວວຽກງານວິຊາສະເພາະຂອງຂະແໜງການທະນາຄານ ທີ່ (ທຫລ), ❽ ພິທີປະກາດການຈັດຕັ້ງຂອງກົມເງິນຕາ ແລະ ສະຖາບັນການທະນາຄານ ແລະ ❾ ພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ, ວັນປູກຕົ້ນໄມ້ແຫ່ງຊາດ 01 ມິຖຸນາ 2018 ແລະ ວັນຢຸດຕິການໃຊ້ແຮງງານເດັກ 02 ມິຖຸນາ 2018;

- ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການຢູ່ເຂດທ້ອງຖິ່ນພາກໃຕ້ແຂວງຈຳປາສັກ;

- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຄະນະກອງທຶນສາຍໄໝ ສປ ຈີນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ຫ້ອງປະຊຸມຫ້ອງວ່າການສູນກາງພັກ), ❷ ກອງປະຊຸມມາດຕະການກະຕຸ້ນເສດຖະກິດມະຫາພາກ (ຫສນຍ), ❸ ກອງປະຊຸມເປີດກວ້າງກ່ຽວກັບ (ຮ່າງ) ຂໍ້ຕົກລົງວ່າດ້ວຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຮ່ວມກັບສະຖາບັນການເງິນ, ❹ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ແລະ ກອງປະຊຸມຄົບຄະນະຮັບຜິດຊອບການພັດທະນາ ການຄຸ້ມຄອງທະນາຄານທຸລະກິດ ຕາມຫຼັກການບາເຊວ;
- ທ່ານຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການຢູ່ເຂດທ້ອງຖິ່ນພາກເໜືອ ແຂວງ ຊຽງຂວາງ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ